# ສິດຂອງທ່ານ

## ພາຍໃຕ້ໂຄງການສິດປະໂຫຍດ ສາທາລະນະ ຂອງລັດຄາລິຟໍເນຍ



….. ສໍາລັບຜູ້ທີ່ສະໝັກ ຫຼືໄດ້ຮັບ ການຊ່ວຍເຫຼືອສາທາລະນະ ໃນລັດຄາລິຟໍເນຍ

ບອກພວກເຮົາຖ້າທ່ານຕ້ອງການຄວາມຊ່ວຍເຫຼືອຍ້ອນຄວາມພິການ.

ຂໍບໍລິການນາຍພາສາຟຣີ

ໜ່ວຍງານສິດປະໂຫຍດຂອງລັດມີໜ້າປະຕິບັດຕາມກົດຫມາຍຂອງລັດຖະບານກາງແລະຂອງລັດ, ແລະບໍ່ສາມາດເລືອກປະຕິບັດ, ຍົກເວັ້ນ, ຫຼືໃຫ້ຄວາມຊ່ວຍເຫຼືອ, ສິດປະໂຫຍດ ຫຼື ການບໍລິການອື່ນໆແກ່ທ່ານທີ່ແຕກຕ່າງຈາກສິ່ງທີ່ສະຫນອງໃຫ້ຄົນອື່ນ.

# ສິດຂອງທ່ານ

ເຈົ້າໜ້າທີ່ທຸກຄົນ ແລະອົງການຈັດຕັ້ງທີ່ໃຫ້ຄວາມຊ່ວຍເຫຼືອສາທາລະນະຕ້ອງເຄົາລົບສິດທິຂອງທ່ານ. ພວກເຂົາສາມາດຊ່ວຍໃຫ້ທ່ານເຂົ້າໃຈແລະສະໜັກເອົາສິດປະໂຫຍດແລະການບໍລິການຕ່າງໆ.

You have the right to an interpreter free of charge.

- يحق لك الحصول على مترجم فوري مجانًا
- Դուք անվճար թարգմանչի իրավունք ունեք:
- អ្នកមានសិទ្ធិទទួលអ្នកបកប្រែភាសាដោយឥតគិត
- 您有權免費獲得口譯員
- شما حق دسترسی به یک مترجم (ترجمان) رایگان را دارید.
- Koj muaj txoj cai kom tus neeg txhais lus tsis raug them nqi
- あなたには無料の通訳をもらう権利があります
- 귀하는 통역사를 무료로 이용할 권리가 있습니다
- ທ່ານມີສິດໄດ້ຮັບນາຍພາສາໂດຍບໍ່ເສຍຄ່າ
- mula sa nakasulat na ingles hanggang sa nakasulat
- Você tem direito a um intérprete, gratuitamente
- ਤੁਹਾਡੇ ਕੋਲ ਦੁਭਾਸ਼ੀਏ ਦਾ ਅਧਿਕਾਰ ਹੈ, ਮੁਫਤ
- Вы имеете право на бесплатные услуги переводчика
- Tiene derecho a servicios gratuitos de un intérprete
- May karapatan ka sa isang tagasalin, nang walang bayad
- Ви маєте право на перекладача безкоштовно
- Quý vị có quyền có được một thông dịch viên miễn phí.

ກະລຸນາສອບຖາມໜ່ວຍງານທີ່ຮັບຜິດຊອບກ່ຽວກັບສິດປະໂຫຍດຫຼືການບໍລິການຂອງທ່ານເພື່ອຂໍຄວາມຊ່ວຍເຫຼືອດ້ານພາສາ.

# ທ່ານມີສິດທີ່ຈະ:

1. ເຂົ້າໃຈວ່າເກີດຫຍັງຂຶ້ນກັບໃບສະໝັກ ຫຼືສິດປະໂຫຍດຂອງທ່ານ.
2. ໄດ້ຮັບຄໍາອະທິບາຍເປັນລາຍລັກອັກສອນແລະວາຈາກ່ຽວກັບໃບສະໝັກຫຼືສິດປະໂຫຍດຂອງທ່ານ. ທ່ານມີສິດໄດ້ຮັບການບໍລິການນາຍພາສາຟຣີສໍາລັບແປຂໍ້ມູນນີ້. ກະລຸນາຖາມ

ລາຍລະອຽດຈາກໜ່ວຍງານທີ່ຮັບຜິດຊອບຕໍ່ສິດປະໂຫຍດ/ການບໍລິການຂອງທ່ານສຳລັບການຊ່ວຍເຫຼືອດ້ານພາສາ.

3. ຖ້າໜ່ວຍງານຂອງລັດມີຄຳອະທິບາຍເປັນລາຍລັກອັກສອນເປັນພາສາອື່ນທີ່ບໍ່ແມ່ນພາສາອັງກິດ, ທ່ານມີສິດທີ່ຈະໄດ້ຮັບຂໍ້ມູນເປັນພາສາເຫຼົ່ານັ້ນ.
4. ຂໍໃບເສັດສຳລັບເອກະສານທີ່ສົ່ງດ້ວຍມື.
5. ຂໍເບິ່ງບັນທຶກຂໍ້ມູນກໍລະນີຂອງທ່ານ
6. ກວດສອບກົດໝາຍ ແລະ ຂໍ້ບັງຄັບກ່ຽວກັບໂຄງການຂອງທ່ານ
7. ຂໍໃຫ້ຜູ້ພິພາດສາທົບທວນຄືນການດຳເນີນການ ຫຼືການລະເວັ້ນດຳເນີນການຂອງໜ່ວຍງານໃດໜຶ່ງໃນການປະຕິບັດໜ້າທີ່ກ່ຽວກັສິດປະໂຫຍດ, ຫຼື ການບໍລິການຂອງທ່ານ.
8. ບໍ່ປະເຊີນກັບການເລືອກປະຕິບັດໃນການສະໝັກເພື່ອຂໍເອົາສິດປະໂຫຍດຫຼືການບໍລິການໃນໂຄງການ.
9. ຍື່ນຄຳຮ້ອງທຸກກ່ຽວກັບການເລືອກປະຕິບັດ.
10. ໄດ້ຮັບ “ການອຳນວຍຄວາມສະດວກຢ່າງເໝາະສົມ” ຖ້າທ່ານມີຄວາມພິການ. ນີ້ແມ່ນຄວາມຊ່ວຍເຫຼືອສະເພາະສຳລັບທ່ານໃນການເຂົ້າເຖິງ ຫຼື ເຂົ້າຮ່ວມໃນໂຄງການ.
11. ໃຫ້ຂໍ້ມູນຂອງທ່ານຖືກເກັບເປັນຄວາມລັບ.
12. ໄດ້ຮັບການປະຕິບັດດ້ວຍຄວາມສຸພາບແລະດ້ວຍເຄົາລົບ.

## ຖ້າທ່ານກຳລັງມີບັນຫາເລື່ອງສິດປະໂຫຍດຫຼືບໍລິການຕ່າງໆ:

<u>ເກັບຮັກສາບັນທຶກຂໍ້ມູນ</u> ເອກະສານ ແລະ ການຕິດຕໍ່ທັງໝົດຂອງທ່ານກັບໜ່ວຍງານ.

<u>ຂໍໃບເສັດ</u> ເມື່ອທ່ານນຳສົ່ງສິ່ງໃດກໍ່ຕາມ.

<u>ພາບຸກຄົນອື່ນໄປປະຊຸມ</u> ກັບທ່ານ.

<u>ການຮຽກຮ້ອງ.</u> ສາມາດເຮັດໄດ້ 4 ວິທີ:

1. ***<u>ບໍ່ເປັນທາງການ:</u>*** ຂໍເວົ້າກັບຫົວໜ້າຄຸມງານເພື່ອເວົ້າລົມກ່ຽວກັບບັນຫາກັບເຈົ້າໜ້າທີ່ ຫຼື ເພື່ອກວດສອບກົດລະບຽບແລະການດຳເນີນການທີ່ສະເໜີກ່ຽວກັບສິດປະໂຫຍດ ຫຼື ການບໍລິການຂອງທ່ານ.

2. ***<u>ການໄຕ່ສວນຈາກລັດ:</u>*** ຮ້ອງຂໍໃຫ້ມີການໄຕ່ສວນຈາກລັດຖ້າທ່ານບໍ່ເຫັນດີນຳກັບການດຳເນີນການ ຫຼື ການລະເວັ້ນການດຳເນີນການຂອງໜ່ວຍງານກ່ຽວກັບສິດປະໂຫຍດ ຫຼື ບໍລິການຂອງທ່ານ. ທ່ານຕ້ອງຮ້ອງຂໍໃຫ້ມີການໄຕ່ສວນຈາກລັດພາຍໃນ 90 ວັນນັບຈາກວັນທີໜ່ວຍງານແຈ້ງກ່ຽວກັບສິດປະໂຫຍດ ຫຼື ການບໍລິການຂອງທ່ານ. ຖ້າທ່ານຮ້ອງຂໍການໄຕ່ສວນຈາກລັດພາຍຫຼັງ 90 ວັນ, ຜູ້ພິພາກສາຕ້ອງພິຈາລະນາວ່າທ່ານມີເຫດຜົນທີ່ດີໃນການຮ້ອງຂໍຊ້າເກີນກຳນົດຫຼືບໍ່ ເຊັ່ນຄວາມເຈັບປ່ວຍຫຼືຄວາມພິການ.

3. ***<u>ການຮຽກຮ້ອງກ່ຽວກັບການເລືອກປະຕິບັດ:</u>*** ກະລຸນາເບິ່ງພາກການຮ້ອງຮຽນກ່ຽວກັບການເລືອກປະຕິບັດ. ທ່ານອາດຈະມີສິດທີ່ແຕກຕ່າງກັນໃນການຍື່ນຄຳຮ້ອງຮຽນກັບໜ່ວຍງານລັດ ຫຼື ຂອງລັດຖະບານກາງ.

4. ***ການຮ້ອງທຸກ:*** ທ່ານສາມາດຍື່ນຄຳຮ້ອງກັບໜ່ວຍງານຂອງລັດຖ້າໜ່ວຍງານນັ້ນມີກົດລະບຽບໃນການຮ້ອງທຸກ. ***ການຮ້ອງທຸກນີ້ບໍ່ເປັນການປົກປ້ອງສິດປະໂຫຍດຂອງທ່ານດ້ວຍວິທີທີ່ການຮ້ອງຂໍໄຕ່ສວນຈາກລັດດໍາເນີນການ.***

# ການໄຕ່ສວນຈາກລັດ

ທ່ານຍັງສາມາດຮ້ອງຂໍໃຫ້ມີການໄຕ່ສວນຈາກລັດຖ້າໜ່ວຍງານຂອງລັດບໍ່ໃຫ້ສິດປະໂຫຍດ ຫຼື ບໍລິການທີ່ທ່ານຄິດວ່າທ່ານຄວນໄດ້ຮັບ. ກະລຸນາເບິ່ງເອກະສານ PUB 412 ສໍາລັບຂໍ້ມູນກ່ຽວກັບການໄຕ່ສວນຈາກລັດ.

***ໝາຍເຫດ: ຖ້າບັນຫາຂອງທ່ານແມ່ນກັບຄວາມຊ່ວຍເຫຼືອ ຫຼື ການບັນເທົາທຸກທົ່ວໄປ***, ທ່ານຈະຕ້ອງຮ້ອງຂໍໃຫ້ມີການໄຕ່ສວນຈາກຄາວຕີ້.

***ຖ້າບັນຫາຂອງທ່ານແມ່ນກ່ຽວກັບສະຫວັດດີການປະກັນສັງຄົມ*** ທ່ານຕ້ອງຕິດຕໍ່ຫາຫ້ອງການປະກັນສັງຄົມເພື່ອຂໍໃຫ້ມີການໄຕ່ສວນ.

# ການຮ້ອງຂໍໃຫ້ມີການໄຕ່ສວນຈາກລັດ

ທ່ານສາມາດຮ້ອງຂໍການໄຕ່ສວນຈາກລັດທາງອອນລາຍ, ທາງໂທລະສັບ, ທາງໂທລະສັ, ທາງອີເມວ ຫຼື ທາງໄປສະນີ.

ທາງອອນລາຍ:ACMS.dss.ca.gov- ທ່ານສາມາດສ້າງບັນຊີເພື່ອໃຫ້ໄດ້ຮັບຂໍ້ມູນການອຸທອນທັງໝົດຂອງທ່ານທາງອອນລາຍ ຫຼື ສົ່ງຄໍາຮ້ອງອອນລາຍໂດຍບໍ່ມີບັນຊີ

| | |
|---|---|
| ໂທລະສັບ: | 1-800-743-8525 |
| ອີເມວ: | SHDCSU@dss.ca.gov |
| ເບີແຟັກ: | 833-281-0905 |
| ທີ່ຢູ່ທາງໄປສະນີ: | State Hearings Division<br>PO Box 944243, MS 21-37<br>Sacramento, CA 94244-2430 |

# ການໄຕ່ສວນແບບເລັ່ງລັດ

ຖ້າທ່ານມີບັນຫາເລັ່ງດ່ວນ, ທ່ານສາມາດຮ້ອງຂໍໃຫ້ມີການໄຕ່ສວນ "ແບບເລັ່ງລັດ" ເພື່ອໃຫ້ມີການໄຕ່ສວນໄວວາຂຶ້ນ. ສໍາລັບກໍລະນີເມດີ-ແຄລ, ການດໍາເນີນການນີ້ແມ່ນຊ່ວຍໄດ້ໃນກໍລະນີການນັດໄຕ່ສວນຕາມປົກກະຕິອາດເປັນອັນຕະລາຍຕໍ່ຊີວິດຂອງຜູ້ລົງທະບຽນຢ່າງຮຸນແຮງບໍ່ວ່າຈະຕໍ່ສຸຂະພາບທາງກາຍຫຼືຈິດໃຈ. ໜ່ວຍງານໄຕ່ສວນຂອງລັດຈະຕັດສິນ ແລະຈະແຈ້ງໃຫ້ທ່ານຮູ້ວ່າຄະດີຂອງທ່ານຈະໄດ້ຮັບການໄຕ່ສວນແບບເລັ່ງລັດບໍ່.

## ການເລືອກປະຕິບັດທີ່ຫ້າມກະທຳ

ພາຍໃຕ້ກົດໝາຍຂອງລັດ, ໜ່ວຍງານຕ່າງໆບໍ່ສາມາດປະຕິເສດການໃຫ້ສິດປະໂຫຍດຫຼືການບໍລິການ ຫຼື ໃຫ້ການຊ່ວຍເຫຼືອທ່ານທີ່ແຕກຕ່າງຈາກການຊ່ວຍເຫຼືອທີ່ສະໜອງໃຫ້ກັບຜູ້ອື່ນໂດຍອີງຕາມ:

*ເຊື້ອຊາດ, ສີຜິວ, ບັນພະບູລຸດ, ຊາດກຳເນີດ (ລວມທັງພາສາ), ເອກະລັກກຸ່ມຊົນເຜົ່າ, ອາຍຸ, ຄວາມພິການທາງດ້ານຮ່າງກາຍຫຼືຈິດໃຈ, ສະພາບທາງການແພດ, ສາດສະໜາ, ເພດ, ເພດສະພາບ, ລັກສະນະທາງເພດ, ອັດຕະລັກທາງເພດ, ລົດນິຍົມທາງເພດ, ສະຖານະພາບສົມລົດ, ການຢູ່ນຳກັນໂດຍບໍ່ໄດ້ແຕ່ງງານ, ຄວາມກ່ຽວຂ້ອງພົວພັນທາງການເມືອງ, ພົນລະເມືອງ, ສະຖານະພາບການເຂົ້າເມືອງ, ແລະຂໍ້ມູນທາງພັນທຸກຳ.*

ກົດໝາຍຂອງລັດຖະບານກາງຍັງຫ້າມການເລືອກປະຕິບັດໂດຍອີງໃສ່ພື້ນຖານຫຼາຍຢ່າງ ເຖິງແມ້ວ່າບໍ່ໄດ້ລະບຸໄວ້ຂ້າງເທິງ. ກົດໝາຍລັດຖະບານກາງຍັງຫ້າມ:

ການເຮັດໃຫ້ຊັກຊ້າຫຼືປະຕິເສດການຮັບເດັກນ້ອຍເປັນລູກບຸນທຳ ໂດຍອີງໃສ່ເຊື້ອຊາດ, ສີຜິວ, ຫຼື ຊາດກຳເນີດຂອງພໍ່ແມ່ບຸນທຳຫຼືພໍ່ແມ່ອຸປະຖຳ ຫຼືຂອງເດັກນ້ອຍເອງ;

ຫ້າມປະຕິເສດບໍ່ໃຫ້ບຸກຄົນໃດໜຶ່ງເປັນພໍ່ແມ່ບຸນທຳຫຼືພໍ່ແມ່ອຸປະຖຳໂດຍອີງໃສ່ເຊື້ອຊາດ, ສີຜິວ, ຫຼືຊາດກຳເນີດຂອງພໍ່ແມ່ບຸນທຳຫຼືພໍ່ແມ່ອຸປະຖຳ ຫຼືຂອງເດັກນ້ອຍຜູ້ກ່ຽວ.

## ຕົວຢ່າງຂອງການເລືອກປະຕິບັດ

ໜ່ວຍງານບໍ່ມີນາຍພາສາໃຫ້ບໍລິການຟຣີ.

ເຈົ້າໜ້າທີ່ແຈ້ງໃຫ້ກຸ່ມຊາດພັນບາງກຸ່ມຊາບກ່ຽວກັບໂຄງການ ແລະການບໍລິການຕ່າງໆຫຼາຍກວ່າຄົນກຸ່ມຊາດພັນອື່ນໆ.

ໜ່ວຍງານຈະບໍ່ຊ່ວຍຫາຂໍ້ມູນທີ່ເປັນຕົວອັກສອນຂະໜາດໃຫຍ່ການຂຽນສະບັບພິມໃຫຍ່ ຫຼືຕົວອັກສອນໂນນໃຫ້ທ່ານເພື່ອຊ່ວຍເຫຼືອທ່ານເຊິ່ງເປັນຜູ້ມີຄວາມບົກຜ່ອງທາງສາຍຕາ.

ເຈົ້າໜ້າທີ່ຮູ້ກ່ຽວກັບສາດສະໜາ ຫຼືລົດສະນິຍົມທາງເພດຂອງທ່ານແລ້ວປະຕິບັດຕໍ່ທ່ານແຕກຕ່າງອອກໄປ.

ທ່ານບໍ່ສາມາດໄປບ່ອນນັດຫມາຍໄດ້ຍ້ອນອາຄານຂອງໜ່ວຍງານບໍ່ມີລິຟ ແລະທ່ານມີຄວາມພິການຈຳກັດຄວາມສາມາດຂອງທ່ານໃນການຂຶ້ນຂັ້ນໄດ.

ທ່ານບໍ່ສາມາດເອົາລົດເຂັນເຂົ້າໄປໃນຫ້ອງກວດ ຫ້ອງສຳພາດ ຫຼືຫ້ອງນ້ຳໄດ້.

ເຈົ້າໜ້າທີ່ປະຕິເສດທີ່ຈະໃຊ້ຊື່ ແລະຄຳໜ້ານາມທີ່ຖືກຕ້ອງຂອງທ່ານ.

# ການອຳນວຍຄວາມສະດວກທີ່ເໝາະສົມ: ຄວາມຊ່ວຍເຫຼືອພິເສດສຳລັບບຸກຄົນທີ່ມີຄວາມພິການ

ບຸກຄົນມີຄວາມພິການທາງຮ່າງກາຍຫຼືຈິດໃຈອາດມີສິດຮ້ອງຂໍການອຳນວຍຄວາມສະດວກທີ່ເໝາະສົມຟຣີຈາກໜ່ວຍງານຂອງລັດເພື່ອຊ່ວຍໃຫ້ເຂົາເຈົ້າສາມາດເຂົ້າເຖິງແລະເຂົ້າຮ່ວມໃນໂຄງການຕ່າງໆໄດ້ . ຖ້າເຈົ້າມີຄວາມພິການ ແລະຕ້ອງການຄວາມຊ່ວຍເຫຼືອພິເສດ ທ່ານຄວນຈະສອບຖາມໜ່ວຍງານທ້ອງຖິ່ນຫຼືໜ່ວຍງານຂອງລັດທີ່ປະຕິບັດໜ້າທີ່ຮັບຜິດຊອບໃນສະໝັກ ຫຼືສິດປະໂຫຍດ/ບໍລິການຂອງທ່ານ. ໜ່ວຍງານນັ້ນຈະຕ້ອງເຮັດວຽກຮ່ວມກັບທ່ານເພື່ອພິຈາລະນາວ່າທ່ານຕ້ອງການຄວາມຊ່ວຍເຫຼືອຫຍັງແດ່ ຖ້າໜ່ວຍງານປະຕິເສດທີ່ຈະອຳນວຍຄວາມສະດວກໃຫ້ກັບທ່ານໜ່ວຍງານນັ້ນຈະຕ້ອງແຈ້ງໃຫ້ທ່ານຊາບເປັນລາຍລັກອັກສອນໂດຍລະບຸເຫດຜົນໃນການປະຕິເສດໃນການປະຕິເສດການໃຫ້ຄວາມຊ່ວຍເຫຼືອກັບທ່ານ. ໜັງສືແຈ້ງການຈະຕ້ອງມີລາຍລະອຽດກ່ຽວກັບສິດຂອງທ່າໃນການອຸທອນ.

# ການຮ້ອງຮຽນກ່ຽວກັບການເລືອກປະຕິບັດ

ຖ້າທ່ານຄິດວ່າທ່ານຖືກເລືອກປະຕິບັດ ທ່ານອາດຈະສາມາດຍື່ນຄຳຮ້ອງຮຽນໄດ້. ບ່ອນທີ່ທ່ານຈະຍື່ນຄຳຮ້ອງຮຽນຂຶ້ນຢູ່ກັບປະເພດຂອງຄຳຮ້ອງຮຽນຂອງທ່ານ.

***<u>ສຳລັບທຸກໂຄງການທັງໝົດໃນຄາວຕີ້ຂອງທ່ານເຈົ້າໜ້າທີ່ບໍລິຫານຄາວຕີ້:</u>*** ກະລຸນາສອບຖາມຊື່, ທີ່ຢູ່ ແລະ ເບີໂທລະສັບຂອງເຈົ້າໜ້າທີ່ປະສານງານດ້ານສິດທິພົນລະເມືອງກັບຫ້ອງການຂອງຄາວຕີ້ຂອງທ່ານ. ໜ່ວຍງານຂອງຄາວຕີ້, ບໍ່ແມ່ນໜ່ວຍງານຂອງລັດ ຈະສືບສວນສືບສວນຄຳຮ້ອງຮຽນຂອງທ່ານຢ່າງເປັນອິດສະຫຼະ.

***<u>ສຳລັບໜ່ວຍງານພາຍໃຕ້ຄວາມຄຸ້ມຄອງໃນລັດຄາລິຟໍເນຍ:</u>***

ເຈົ້າໜ້າທີ່ປະສານງານດ້ານສິດທິພົນລະເມືອງພາຍໃຕ້ຄວາມຄຸ້ມຄອງໃນລັດຄາລິຟໍເນຍ
PO Box 989725
West Sacramento, CA 95789
(916) 228-8764
CivilRights@covered.ca.gov

***<u>ສຳລັບໂຄງການເມດີ-ແຄລ ແລະ ເມດີ-ແຄລທັນຕະກຳ:</u>***

ທ່ານອາດຈະສາມາດຕິດຕໍ່ເຈົ້າໜ້າທີ່ປະສານງານດ້ານສິດທິພົນລະເມືອງຂອງຄາວຕີ້, ພະແນກບໍລິການດູແລສຸຂະພາບ ຫຼື ພະແນກສາທາລະນະສຸກ ແລະ ບໍລິການມະນຸດຂອງລັດຖະບານກາງ.

Department of Health Care Services
Office of Civil Rights
PO Box 997413, MS 0009
Sacramento, CA 95899-7413
(916) 440-7370 or 711 (Calif. Relay Service)
CivilRights@dhcs.ca.gov

***ສໍາລັບໂຄງການອື່ນທັງໝົດຂອງລັດພາຍໃຕ້ຄວາມຄຸ້ມຄອງໃນແຜນພັບນີ້:***

Civil Rights Unit
California Department of Social Services
PO Box 944243, MS 9-7-41
Sacramento, CA 94244-2430
(866) 741-6241 (ໂທຟຣີ)
(916) 651-0602 (ແຟັກ)
crb@dss.ca.gov

***ຍື່ນຄໍາຮ້ອງທຸກກ່ຽວກັບ CalFresh ຕໍ່ໜ່ວຍຂອງລັດຖະບານກາງ:***

United States Department of Agriculture
Director, Office of Adjudication
1400 Independence Avenue, SW
Washington, DC 20250-9410
(866) 632-9992 (toll free) or (202) 260-1026
(800) 877-8339 (ຜູ້ພິການທາງການໄດ້ຍິນ)
program.intake@usda.gov

***ການຍື່ນຄໍາຮ້ອງຕໍ່ໜ່ວຍງານຂອງລັດຖະບານກາງ:***

ສໍາລັບການຮ້ອງຮຽນກ່ຽວກັບເຊື້ອຊາດ, ສີຜິວ, ຊາດກໍາເນີດ, ຄວາມພິການ, ອາຍຸ, ຫຼືເພດເທົ່ານັ້ນ:

Centralized Case Management Operations
United States Department of Health and
Human Services
200 Independence Avenue, SW
Room 509F, HHH Building
Washington, DC 20201

ຍື່ນຄຳຮ້ອງທຸກຜ່ານທາງອອນລາຍທີ່:

[ຫ້ອງການສິດທິພົນລະເມືອງປະຈຳຫ້ອງການບໍລິການສຸຂະພາບ_ແລະ_ມະນຸດພອທັນສຳລັບການຮ້ອງຮຽນ]

(800) 368-1019 (ໂທຟຣີ)
(800) 537-7697 (ສຳລັບຜູ້ບົກຜ່ອງທາງການໄດ້ຍິນ/ການປາກເວົ້າ)

***<u>ກຳນົດເວລາໃນການຮ້ອງຮຽນເລື່ອງການເລືອກປະຕິບັດ</u>***

ທ່ານຕ້ອງຍື່ນຄຳຮ້ອງຮຽນເລື່ອງການເລືອກປະຕິບັດພາຍໃນ 180 ມື້ອັນນັບຈາກວັນທີທີ່ທ່ານຖືກເລືອກປະຕິບັດ.

ຖ້າການເລືອກປະຕິບັດສົ່ງຜົນກະທົບຕໍ່ລະດັບໃນການໄດ້ຮັບສິດປະໂຫຍດ ແລະ ການບໍລິການຂອງທ່ານເຊັ່ນກັນ, ກະລຸນາຮ້ອງຂໍໃຫ້ມີການໄຕ່ສວນ.

ຜູ້ພິພາກສາບໍ່ສາມາດຕັດສິນກ່ຽວກັບການຮ້ອງທຸກກ່ຽວກັບການເລືອກປະຕິບັດໃນການໄຕ່ສວນໄດ້.

*ການສືບສວນການເລືອກປະຕິບັດບໍ່ສາມາດປ່ຽນແປງສິດປະໂຫຍດ ຫຼື ລະດັບໃນການໄດ້ຮັບບໍລິການຂອງທ່ານ. ການໄຕ່ສວນຂອງລັດເທົ່ານັ້ນທີ່ສາມາດຕັດສິນໄດ້, ຖ້າທ່ານຮ້ອງຂໍໃຫ້ມີການໄຕ່ສວນ ຫຼື ຍື່ຄຳຮ້ອງຮຽນກ່ຽວກັບການເລືອກປະຕິບັດ ບໍ່ອານຸຍາດໃຫ້ໜ່ວຍງານຕອບໂຕ້ທ່ານ.*

# ໂຄງການທີ່ໄດ້ຮັບຄວາມຄຸ້ມຄອງພາຍໃຕ້ແຜ່ນພັບນີ້

- ໂຄງການຊ່ວຍເຫຼືອການຮັບລ້ຽງລູກບຸນທຳ (AAP)
- ໂຄງການແອກໍຮໍ ແລະ ສານແສບຕິດ
- ໂຄງການຊ່ວຍເຫຼືອດ້ານອາຫານຂອງລັດແຄລິຟໍເນຍ
- ແຄລເວີກ (CalWORKs)
- ໂຄງການຊ່ວຍເຫຼືອດ້ານເງິນສົດແກ່ຄົນອົບພະຍົບ
- ແຄລເຟຣຊ ຫຼື ບັດອາຫານ (Food Stamps)
- ໂຄງການປະກັນສຸຂະພາບເດັກນ້ອຍ (CHIP)
- ສິດພາຍໃຕ້ຄວາມຄຸ້ມຄອງຂອງລັດແຄລິຟໍເນຍ
- ບໍລິການກ່ຽວກັບການອຸປະຖຳ/ສະຫວັດດີການເດັກ
- ໂຄງການທີ່ພັກອາໃສຜ່ານພະແນກບໍລິການສັງຄົມຂອງຄາວຕີ້

- ການບໍລິການສະໜັັັບສະໜູນພາຍໃນເຮືອນ
- ຄວາມຊ່ວຍເຫຼືອດ້ານການຄຸ້ມຄອງຍາດພີ່ນ້ອງ
- ໂຄງການເມດິ-ແຄລ ແລະ ເມດິ-ແຄລທັນຕະກໍາ
- ຄວາມຊ່ວຍເຫຼືອດ້ານເງິນສິດແກ້ຜູ້ລີ້ໄພ
- ການອະນຸມັດຊັບພະຍາກອນສໍາລັບຄອບຄົວ (RFA)
- ໂຄງການຈັດຫາເງິນທຶນດູແລຍາດພີ່ນ້ອງແບບທາງເລືອກທີ່ໄດ້ຮັບອານຸຍາດ (ARC)
- ເງິນຊ່ວຍເຫຼືອສັດລ້ຽງສໍາລັບໃຫ້ບໍລິການ

# State of California
# Health & Human Services Agency
# Department of Social Services

ມີແຜ່ນພັບນີ້ໃຫ້ທີ່ຫ້ອງການສະຫວັດດີການຂອງຄາວຕີ້ ແລະ ໃນເວັບໄຊຂອງ CDSS website ເປັນພາສາຕ່າງໆດັ່ງຕໍ່ໄປນີ້:

- ພາສາອາຫຼັບ
- ພາສາອາກເມນີ
- ພາສາກຳປູເຈຍ
- ພາສາຈີນ
- ພາສາຟາຊີ
- ພາສາມົ້ງ
- ພາສາຍີ່ປຸ່ນ
- ພາສາເກົາຫຼີ
- ພາສາລາວ
- ພາສາມ້ຽນ
- ພາສາປອກຕຸຍການ
- ພາສາປັນຈາບ
- ພາສາລັດເຊຍ
- ພາສາສະເປນ
- ພາສາຕາກາລອກ
- ພາສາຢູເຄຣນ
- ພາສາຫວຽດ

ນອກຈາກນີ້ຍັງມີແຜ່ນພັບໃຫ້ຟຣີໃນຮູບແບບຕົວອັກສອນຂະໜາດໃຫ່ຍ, ອັກສອນເບຣລ ແລະ ໃນຮູບແບບສຽງ.

ສິ່ງພິມນີ້ອະທິບາຍເຖິງສິດຂອງທ່ານໃນການໄດ້ຮັບສິດປະໂຫຍດ ແລະ ບໍລິການທີ່ເທົ່າທຽມກັນ, ວິທີການຂໍຄວາມຊ່ວຍເຫຼືອດ້ານພາສາ ຫຼື ການອຳນວຍຄວາມສະດວກສຳລັບຜູ້ມີຄວາມພິການ ແລະ ວິທີການຍື່ນຄຳຮ້ອງຮຽນກ່ຽວກັບການເລືອກປະຕິບັດ.